ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ຫ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ສະຫຼຸບ-ຖອດຖອນບົດຮຽນ ການຄຸ້ມຄອງສະຖາບັນການເງິນ



ກອງປະຊຸມສະຫຼຸບຄືນການປະຕິບັດວຽກງານ ການຄຸ້ມຄອງສະຖາບັນການເງິນ ໃນປີ 2021 ໄດ້ຈັດຂຶ້ນໃນວັນທີ 29 ມິຖຸນາ 2022 ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທະນາຄານແຫ່ງ ສປປ ລາວ (ທຫລ), ນະຄອນຫຼວງວຽງຈັນ. ພາຍໃຕ້ການເປັນປະທານຂອງທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ ເຊິ່ງມີຄະນະກົມ, ຄະນະພະແນກ, ວິຊາການກົມກ່ຽວຂ້ອງ ແລະ ສາຂາ ທຫລ ປະຈຳພາກ ເຂົ້າຮ່ວມທັງຫມົດ 40 ທ່ານ.

ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ ໄດ້ໃຫ້ຮູ້ວ່າ ກອງປະຊຸມຄັ້ງນີ້ມີຄວາມໝາຍຄວາມສຳຄັນ ຢ່າງຍິ່ງ ເປັນການສະຫຼຸບຄືນການປະຕິບັດວຽກງານ ການຄຸ້ມຄອງສະຖາບັນການເງິນ ໃນປີ 2021 ຜ່ານມາ, ເພື່ອຈະໄດ້ພ້ອມກັນຕີລາຄາຜົນການເຄື່ອນໄຫວ ທັງໃນ ດ້ານຕັ້ງໜ້າ ທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດ ແລະ ດ້ານຂໍ້ຄົງຄ້າງ ທີ່ຈະຕ້ອງປັບປຸງໃນການພັດທະນາເສດຖະກິດ-ສັງຄົມໃຫ້ດີຂຶ້ນ ເຊິ່ງເປັນທາງເລືອກໜຶ່ງເພື່ອໃຫ້ປະຊາຊົນສາມາດເຂົ້າໃຊ້ບໍລິການດ້ານການເງິນໄດ້ຫຼາຍຂຶ້ນ ໂດຍສະເພາະການແກ້ໄຂຄວາມທຸກຍາກຂອງປະຊາຊົນເທື່ອລະກ້າວ.

ວຽກງານສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເປັນວຽກງານໜຶ່ງທີ່ສຳຄັນໃນການປະກອບສ່ວນຊຸກຍູ້ໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ ລວມທັງມີການປະກອບສ່ວນໃນການແກ້ໄຂຄວາມທຸກຍາກຢູ່ບັນດາເມືອງຕິດພັນກັບວຽກງານ 3 ສ້າງ ແລະ ຊ່ວຍສົ່ງເສີມຄວາມອາດສາມາດໃນການສູ້ຊົນ ເພື່ອຮັບປະກັນ ເປົ້າໝາຍສະຫັດສະ

ວັດ ດ້ານການພັດທະນາ ໂດຍເຊື່ອມເຂົ້າໃນການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ ໃນນັ້ນ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານກໍເປັນພາກສ່ວນໜຶ່ງຂອງຂະແໜງທະນາຄານທີ່ພັກ ແລະ ລັດຖະບານໄດ້ມີການວາງນະໂຍບາຍສະເພາະເພື່ອແນ່ໃສ່ສ້າງເງື່ອນໄຂທີ່ເອື້ອອໍານວຍໃນດ້ານຕ່າງໆ ເພື່ອສົ່ງເສີມສະຖາບັນການເງິນໃຫ້ມີຫຼາຍຮູບແບບກໍາມະສິດ ແລະ ມີການຂະຫຍາຍຕົວຢ່າງເຂັ້ມແຂງ ເພື່ອປະກອບສ່ວນສະໜອງທຶນຮອນໃຫ້ແກ່ປະຊາຊົນໃນການແກ້ໄຂຄວາມທຸກຍາກ, ພ້ອມທັງປົກປ້ອງຜູ້ໃຊ້ບໍລິການບົນພື້ນຖານການຕິດຕາມການເຄື່ອນໄຫວວຽກງານດັ່ງກ່າວໃນປີຜ່ານມາເຫັນໄດ້ວ່າການພັດທະນາສະຖາບັນການເງິນແມ່ນມີຄວາມຄືບໜ້າໃນຫຼາຍດ້ານພໍສົມຄວນເປັນຕົ້ນ: ການສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະ, ບັນດາສະຖາບັນການເງິນໄດ້ມີການປັບຕົວໃນທ່ວງທ່າທີ່ດີຂຶ້ນເປັນກ້າວໆ ອັນເນື່ອງມາຈາກການປະຕິບັດບົດບາດໜ້າທີ່ກໍຄື ຜົນຈາກການຮ່ວມມືຂອງບັນດາພາກສ່ວນທ້ອງຖິ່ນຕ່າງໆ ເຊັ່ນ: ພາກສ່ວນຜູ້ຄຸ້ມຄອງ ແລະ ຂອດປະສານງານແມ່ນໄດ້ມີການປັບປຸງຢ່າງເປັນລະບົບເຮັດໃຫ້ການເຄື່ອນໄຫວໂດຍລວມມີຄວາມຮັດກຸມ ແລະ ສະດວກຫຼາຍຂຶ້ນ. ສະນັ້ນ, ເພື່ອເສີມຂະຫຍາຍທ່າແຮງ ດັ່ງກ່າວ ທະນາຄານແຫ່ງ ສປປ ລາວ ໄດ້ເລັ່ງໃສ່ສ້າງຄວາມເຂັ້ມແຂງ ໃນການສົ່ງເສີມ ແລະ ຄຸ້ມຄອງ ເພື່ອເປັນໃຈກາງປີ່ນອ້ອມ ຂະແໜງການອື່ນໆທີ່ກ່ຽວຂ້ອງດ້ວຍຫຼາຍຮູບການ ແລະ ຮ່ວມກັບຫຼາຍພາກສ່ວນ ທັງພາຍໃນ ແລະ ສາກົນ ໂດຍສະເພາະ ໄດ້ດຶງດູດເອົາການຮ່ວມມືຈາກສາກົນ ໃນຮູບແບບໂຄງການຊ່ວຍເຫຼືອ ເພື່ອຫັນເອົາທຶນຮອນ ແລະ ເຕັກນິກວິຊາສະເພາະເຂົ້າສູ່ແຜນການ, ແຜນງານ ແລະ ການຈັດຕັ້ງປະຕິບັດຕົວຈິງ ເພື່ອກາຍເປັນກໍາລັງສໍາຄັນ ໃນການປະກອບສ່ວນຊຸກຍູ້ສົ່ງເສີມຢ່າງແຂງແຮງ ເຂົ້າໃນການສະໜອງແຫຼ່ງທຶນໃຫ້ແກ່ປະຊາຊົນຜູ້ທຸກຍາກຜູ້ທີ່ມີລາຍໄດ້ຕໍ່າກໍ່ເພີ່ມຂຶ້ນ.




ກອງປະຊຸມ ໄດ້ຮັບຟັງການສະຫຼຸບຜົນງານອັນພົ້ນເດັ່ນໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄຸ້ມຄອງສະຖາບັນການເງິນ ຢ່າງເລິກເຊິ່ງ ແລະ ຢ່າງກົງໄປກົງມາ, ບັນດາໜ້າວຽກທີ່ຕິດພັນກັບການສ້າງນິຕິກໍາ, ການຂໍສ້າງຕັ້ງ, ການວິເຄາະ, ການກວດກາ ແລະ ຄຸ້ມຄອງໂຄງການນັ້ນ ເຊິ່ງຖືວ່າເປັນການ ແລກປ່ຽນບົດຮຽນ ແລະ ປະສົບການທີ່ດີ ແລະ ເປັນປະໂຫຍດໃຫ້ແກ່ຜູ້ເຂົ້າຮ່ວມກອງປະຊຸມ. ນອກຈາກນັ້ນບັນດາທ່ານຜູ້ເຂົ້າຮ່ວມໃນກອງປະຊຸມກໍ່ໄດ້ມີຄວາມຮັບຜິດຊອບສູງໃນການປະກອບຄໍາເຫັນຢ່າງສ້າງສັນ ແລະ ກົງໄປກົງມາເຮັດໃຫ້ບັນຍາກາດຂອງກອງປະຊຸມມີຄວາມຟົດຟື້ນ. ກອງປະຊຸມໄດ້ດໍາເນີນໄປເປັນເວລາ 01 ວັນເຕັມ ແລະ ໄດ້ອັດລົງດ້ວຍຜົນສໍາເລັດອັນຈົບງາມ.

**#ຂ່າວໂດຍ: ນາງ ປາໃນ ພົນທະລາ**

**#ພາບໂດຍ: ທ່ານ ສົມພົດ ທໍາມະວົງ**